ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ກົມອາຫານ ແລະ ຢາ

ເລກທີ: 3824 /ກອຢ

ນະຄອນຫຼວງວຽງຈັນ, ວັນທີ 05 JUL 2024

# ຂັ້ນຕອນການປະຕິບັດ ທີ່ເປັນມາດຕະຖານ ກ່ຽວກັບ ການຕິດຕາມ, ເຝົ້າລະວັງ ແລະ ປະຕິບັດມາດຕະການ ສໍາລັບການໂຄສະນາອາຫານ, ຢາ ແລະ ຜະລິດຕະພັນການແພດທາງອອນລາຍ

## 1. ຈຸດປະສົງ

- ເພື່ອເປັນເຄື່ອງມືໃຫ້ພະນັກງານອາຫານ ແລະ ຢາ ທີ່ຮັບຜິດຊອບວຽກງານ ຕິດຕາມ, ເຝົ້າລະວັງ ແລະ ການປະຕິບັດມາດຕະການ ສໍາລັບການໂຄສະນາອາຫານ, ຢາ ແລະ ຜະລິດຕະພັນການແພດທາງອອນລາຍ ໃຫ້ຮູ້ວິທີການ ແລະ ຂັ້ນຕອນໃນການດໍາເນີນງານ.
- ເພື່ອສະກັດກັ້ນ ການໂຄສະນາອາຫານ, ຢາ ແລະ ຜະລິດຕະພັນການແພດເກີນຄວາມເປັນຈິງ, ໂອ້ອວດ, ຫຼອກລວງຜູ້ບໍລິໂພກ ແລະ ບໍ່ໄດ້ຮັບອະນຸຍາດດ້ານເນື້ອໃນຈາກກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ.
- ເພື່ອຄຸ້ມຄອງ, ກວດກາ ແລະ ຕິດຕາມການໂຄສະນາຜະລິດຕະພັນອາຫານ, ຢາ ແລະ ຜະລິດຕະພັນການແພດທາງອອນລາຍໃຫ້ປະຕິບັດຕາມລະບຽບ, ກົດໝາຍ ທີ່ປະກາດໃຊ້.

## 2. ຂອບເຂດ ການນໍາໃຊ້

ຂັ້ນຕອນການປະຕິບັດງານນີ້ ແມ່ນນໍາໃຊ້ສໍາລັບກົມອາຫານ ແລະຢາ, ກອງກວດກາອາຫານ ແລະ ຢາ, ຂະແໜງອາຫານ ແລະ ຢາແຂວງ, ນະຄອນຫຼວງ, ໜ່ວຍງານອາຫານ ແລະ ຢາເມືອງ, ນະຄອນ/ເທດສະບານ ທີ່ຮັບຜິດຊອບວຽກງານການຕິດຕາມ ເຝົ້າລະວັງ ແລະ ການປະຕິບັດມາດຕະການ ສໍາລັບການໂຄສະນາອາຫານ, ຢາ ແລະ ຜະລິດຕະພັນການແພດຜ່ານຊ່ອງທາງສື່ອອນລາຍ ເຊັ່ນ: ເວບໄຊ (Website), ເຟສບຸກ (Facebook), ເພສ (Pages), ຕິກຕ໋ອກ (Tiktok), ຢູທູບ (You Tube), ອິນສະຕາແກຣມ (Instagram), ກູໂກລ (Google) ແລະ ອື່ນໆ.

3. ການເກັບກຳຂໍ້ມູນ ແລະ ກະກຽມກ່ອນການດຳເນີນງານ.

ການເກັບກຳຂໍ້ມູນ ແລະ ກະກຽມກ່ອນການດຳເນີນງານ ແມ່ນມີແຫຼ່ງຂໍ້ມູນທີ່ກ່ຽວຂ້ອງ ແລະ ຈັດຕັ້ງປະຕິບັດດັ່ງນີ້:

- ແຫຼ່ງຂໍ້ມູນການໂຄສະນາອາຫານ, ຢາ ແລະ ຜະລິດຕະພັນການແພດ ທີ່ບໍ່ຖືກຕ້ອງທີ່ໄດ້ຈາກການຕິດຕາມ ເຝົ້າລະວັງຂອງກົມອາຫານ ແລະຢາ, ກອງກວດກາອາຫານ ແລະ ຢາ, ຂະແໜງອາຫານ ແລະ ຢາແຂວງ, ນະຄອນຫຼວງ, ໜ່ວຍງານອາຫານ ແລະ ຢາ ເມືອງ, ນະຄອນ/ເທດສະບານ.
- ແຫຼ່ງຂໍ້ມູນທີ່ໄດ້ຮັບການແຈ້ງຈາກ ຜູ້ບໍລິໂພກ, ຂະແໜງການອື່ນ, ສາຍດ່ວນ, ທາງສຽງຈາກສັງຄົມ ແລະ ປະຊາຊົນ ກ່ຽວກັບການໂຄສະນາອາຫານ, ຢາ ແລະ ຜະລິດຕະພັນການແພດທີ່ໂຄສະນາໂອ້ອວດສັບພະຄຸນເກີນຈິງ, ຊວນເຊື່ອ ແລະ ຫຼອກລວງ.
- ຄົ້ນຫາຂໍ້ມູນທີ່ໄດ້ຮັບ ໂດຍສະເພາະເນື້ອໃນ ແລະ ລາຍລະອຽດອື່ນໆ ຂອງການໂຄສະນາຜະລິດຕະພັນອາຫານ, ຢາ ແລະ ຜະລິດຕະພັນການແພດທີ່ໂຄສະນາຜ່ານຊ່ອງທາງສື່ອອນລາຍ.
- ຕິດຕາມການໂຄສະນາຜ່ານທາງສື່ອອນລາຍ, ເກັບຫຼັກຖານຮູບພາບ, ສຽງ, ວີດີໂອ(ຄລິບ) ແລະ ເນື້ອໃນ ກ່ຽວກັບການໂຄສະນາຜະລິດຕະພັນອາຫານ, ຢາ ແລະ ຜະລິດຕະພັນການແພດທີ່ໂຄສະນາອວດອ້າງສັບພະຄຸນເກີນຈິງ, ຊວນເຊື່ອ ຫຼື ຫຼອກລວງຜູ້ບໍລິໂພກ.
- ກວດຄືນ ຂໍ້ມູນ ການຂຶ້ນທະບຽນຜະລິດຕະພັນ ນຳກົມອາຫານ ແລະ ຢາ ຫຼື ຜ່ານທາງເວບໄຊຂອງກົມອາຫານ ແລະ ຢາ www.fdd.gov.la ແລະ ໃຫ້ກວດຄືນ ຂໍ້ມູນການນຳເຂົ້າ ກັບໜ່ວຍງານທີ່ກ່ຽວຂ້ອງຂອງກົມອາຫານ ແລະ ຢາ ຫຼື ອາຫານ ແລະ ຢາແຂວງ.
- ໃນກໍລະນີ ຂຶ້ນທະບຽນແລ້ວ, ຕ້ອງກວດກາປະເພດຂອງຜະລິດຕະພັນທີ່ໄດ້ຂຶ້ນທະບຽນເຊັ່ນ: ຢາຫຼວງ, ອຸປະກອນການແພດ, ຢາພື້ນເມືອງ, ຜະລິດຕະພັນເສີມສຸຂະພາບ, ອາຫານ, ອາຫານເສີມ, ອາຫານເສີມທາງການແພດ, ເຄື່ອງສຳອາງ ແລະ ອື່ນໆ.
- ໃນກໍລະນີ ຍັງບໍ່ໄດ້ຮັບການຂຶ້ນທະບຽນ ແລະ ບໍ່ໄດ້ຮັບອະນຸຍາດນຳເຂົ້າຈາກຂະແໜງສາທາລະນະສຸກ ຖືວ່າເປັນຜະລິດຕະພັນ ຜິດກົດໝາຍ ແມ່ນສາມາດປະຕິບັດມາດຕະການ ຕາມລະບຽບການ.
- ຕິດຕໍ່ກັບເພສທີ່ໂຄສະນາດັ່ງກ່າວ ເພື່ອໃຫ້ໄດ້ຂໍ້ມູນກ່ຽວກັບ ແຫຼ່ງຜະລິດ, ຜູ້ນຳເຂົ້າ ແລະ ຜູ້ຈຳໜ່າຍຢູ່ ສປປ ລາວ, ຮູບແບບການຈຳໜ່າຍເປັນຕ່ອງໂສ້, ມີສະຖານທີ່ຫ້າງ, ຮ້ານ, ບຸກຄົນ, ບໍລິສັດຂົນສົ່ງ ຫຼື ຜູ້ຂົນສົ່ງ ທີ່ສາມາດຕິດຕໍ່ ແລະ ຮູ້ຂໍ້ມູນເຈົ້າຂອງຜະລິດຕະພັນ ທີ່ໂຄສະນາອອນລາຍບໍ່ຖືກຕ້ອງດັ່ງກ່າວ.
- ສັງລວມຂໍ້ມູນທີ່ເກັບກຳທັງໝົດຂ້າງເທິງນັ້ນ ໂດຍສົມທົບກັບພະແນກການ, ຂະແໜງ, ໜ່ວຍງານທີ່ກ່ຽວຂ້ອງ ເພື່ອປຶກສາຫາລື, ລາຍງານ ແລະ ຂໍທິດຊີ້ນຳຈາກຂັ້ນເທິງຂອງຕົນ.

4. <u>ການດຳເນີນງານ</u>

ໃນກໍລະນີ ການໂຄສະນາທີ່ບໍ່ຖືກລະບຽບ ທີ່ພົວພັນເຖິງຫຼາຍປັດໃຈ ແມ່ນຈະໄດ້ຈັດກອງປະຊຸມປຶກສາຫາລື ເພື່ອແກ້ໄຂ ຊຶ່ງລາຍລະອຽດມີດັ່ງນີ້:

- ກະກຽມຮ່າງບັດເຊີນ ແລະ ຂຶ້ນແຜນວັນ, ເວລາ, ສະຖານທີ່ ແລະ ເອກະສານຫຼັກຖານທີ່ກ່ຽວຂ້ອງ, ກຳນົດເປົ້າໝາຍເຊີນ ພາກສ່ວນທີ່ກ່ຽວຂ້ອງ ແລະ ເຈົ້າຂອງຜະລິດຕະພັນ ຫຼື ຜູ້ທີ່ລະເມີດລະບຽບການໂຄສະນາ ເຂົ້າຮ່ວມປະຊຸມປຶກສາຫາລື, ກ່າວເຕືອນ ແລະ ສຶກສາອົບຮົມ ເພື່ອແກ້ໄຂບັນຫາການໂຄສະນາຜະລິດຕະພັນ ທີ່ບໍ່ໄດ້ຮັບອະນຸຍາດ.

- ກ່ອນການດຳເນີນ ປະຊຸມກັບຜູ້ດຳເນີນທຸລະກິດ ທີ່ລະເມີດ, ພາກສ່ວນທີ່ກ່ຽວຂ້ອງ ຕ້ອງຈັດປະຊຸມພາຍໃນພາກລັດກ່ອນ ເພື່ອຄວາມເປັນເອກະພາບກ່ຽວກັບການກຳນົດວິທີການ ແລະ ປະຕິບັດມາດຕະການຕໍ່ຜູ້ລະເມີດ.

- ດຳເນີນກອງປະຊຸມກັບພາກສ່ວນທີ່ກ່ຽວຂ້ອງ ແລະ ຜູ້ດຳເນີນທຸລະກິດ ເພື່ອໃຫ້ໄດ້ ຂໍ້ຕົກລົງໃນການປະຕິບັດ ພ້ອມທັງ ເຮັດບົດບັນທຶກ ຕາມການຕົກລົງເຫັນດີເປັນເອກະພາບ ແລະ ລົງລາຍເຊັນຮັບຮູ້ໂດຍ ປະທານກອງປະຊຸມ ແລະ ຜູ້ດຳເນີນທຸລະກິດ.

- ສົ່ງບົດບັນທຶກໃຫ້ທຸກຂະແໜງການ ແລະ ຜູ້ດຳເນີນທຸລະກິດທີ່ເຂົ້າຮ່ວມປະຊຸມ ເພື່ອຈັດຕັ້ງປະຕິບັດຕາມການຕົກລົງຂອງກອງປະຊຸມ, ພ້ອມທັງສົ່ງບົດບັນທຶກດັ່ງກ່າວ ເພື່ອລາຍງານ ແລະ ຂໍທິດຊີ້ນຳຈາກຂັ້ນເທິງ.

- ພາກສ່ວນອາຫານ ແລະ ຢາ ທີ່ດຳເນີນກອງປະຊຸມ ຕ້ອງເປັນເຈົ້າການໃນການຕິດຕາມ ການໂຄສະນາຂອງຜູ້ດຳເນີນທຸລະກິດທີ່ເຄີຍໄດ້ເຊີນມາກ່າວເຕືອນ ແລະ ສຶກສາອົບຮົມ ຜ່ານມາ ວ່າໄດ້ປະຕິບັດຕາມການຕົກລົງຍິນຍອມໃນກອງປະຊຸມ ຫຼື ບໍ່.

- ພາຍຫຼັງທີ່ໄດ້ປະຊຸມປຶກສາຫາລື ແລະ ຕົກລົງເປັນເອກະພາບກັນແລ້ວ ພາກສ່ວນທີ່ດຳເນີນການຕ້ອງລາຍງານໃຫ້ແກ່ເຈົ້າໜ້າທີ່ຄຸ້ມຄອງອາຫານ ແລະ ຢາ ໃນຂັ້ນສູນກາງ ເພື່ອຮັບຊາບ ແລະ ອອກແຈ້ງການແນະນຳພາກສ່ວນກ່ຽວຂ້ອງໃນການເຝົ້າລະວັງ ແລະ ສືບຕໍ່ຕິດຕາມ ກວດກາເພື່ອຫຼີກລ້ຽງບັນຫາທີ່ຈະເກີດຂຶ້ນອີກ.

- ເຈົ້າໜ້າທີ່ອາຫານ ແລະ ຢາ ແຕ່ລະຂັ້ນ ໃຫ້ເປັນເຈົ້າການໃນການຕິດຕາມ, ກວດກາ ເຝົ້າລະວັງ ແລະ ຕອບໂຕ້ການໂຄສະນາອາຫານ, ຢາ ແລະ ຜະລິດຕະພັນການແພດທາງອອນລາຍທີ່ບໍ່ໄດ້ຮັບອະນຸຍາດດ້ານເນື້ອໃນຈາກ ກົມອາຫານ ແລະ ຢາ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ.

5. <u>ການປະຕິບັດມາດຕະການ.</u>

ໃນກໍລະນີ ຜູ້ດຳເນີນທຸລະກິດ ບໍ່ປະຕິບັດຕາມ ບົດບັນທຶກໃຫ້ປະຕິບັດດັ່ງລຸ່ມນີ້:

- ເມື່ອໄດ້ຕັກເຕືອນ ແລະ ສຶກສາອົບຮົມ ຄັ້ງທີ່ 1 ແລ້ວ, ແຕ່ຍັງບໍ່ປະຕິບັດຕາມການຕົກລົງ ແມ່ນໄດ້ເຊີນເປັນຄັ້ງທີ່ 2 ໃຫ້ເຮັດບົດບັນທຶກ ແລະ ປັບໃໝ 1,500,000 ກີບ. ຖ້າໄດ້ເຊີນມາເປັນຄັ້ງທີ 3 ໃຫ້ເຮັດບົດບັນທຶກ ແລະ ປັບໃໝ 3,000,000 ກີບ ພ້ອມທັງຖອນທະບຽນ ຫຼື ຈົດແຈ້ງຂອງ ຜະລິດຕະພັນ ຕາມຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງໂຄສະນາອາຫານ, ຢາ ແລະ ຜະລິດຕະພັນການແພດສະບັບເລກທີ 1494/ສທ, ລົງວັນທີ 06/07/2016 ແລະ ກໍລະນີທີ່ມີຜົນກະທົບຮ້າຍແຮງຕໍ່ສຸຂະພາບຕ້ອງປະຕິບັດຕາມລະບຽບ ກົດໝາຍຂອງ ສປປ ລາວ.

- ໃນກໍລະນີບັນຫາກ່ຽວຂ້ອງຍັງມີການສືບຕໍ່ລະເມີດໂຄສະນາ ໂດຍບໍ່ເອົາໃຈໃສ່ຕໍ່ການຕັກເຕືອນ, ແນະນຳ, ບໍ່ໃຫ້ການຮ່ວມມື ຂອງເຈົ້າໜ້າທີ່ກ່ຽວຂ້ອງ, ກົມອາຫານ ແລະ ຢາ ສາມາດສັງລວມເອົາຂໍ້ມູນ ແລະ ເຫດການ ທີ່ເຜີຍແຜ່ຢູ່ໃນສື່ອອນລາຍທີ່ບໍ່ຖືກຕ້ອງນັ້ນ ມາເປັນຂໍ້ມູນໃນການ ແຈ້ງຕໍ່ສັງຄົມຜ່ານເພສ ກົມອາຫານ ແລະ ຢາ ຫຼື ເວບໄຊ ກົມອາຫານ ແລະ ຢາ ເພື່ອໃຫ້ຜູ້ບໍລິໂພກບໍ່ຫຼົງເຊື່ອ, ມີສະຕິ ລະວັງຕົວ ແລະ ໃຫ້ຄວາມຮ່ວມມືໃນການສະກັດກັ້ນ.

- ແລກປ່ຽນຂໍ້ມູນ ຈາກການແຈ້ງເຕືອນໃນເພສ ແລະ ເວບໄຊສຂອງກົມອາຫານ ແລະ ຢາ ໂດຍການສົ່ງຕໍ່ໃຫ້ແກ່ແຫຼ່ງຂ່າວທີ່ຖືກຕ້ອງ ເພື່ອໃຫ້ຂໍ້ມູນຢ່າງກ້ວາງຂວາງໃນສັງຄົມ.

- ຂະແໜງການສາທາລະນະສຸກ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ສາມາດສັ່ງຢຸດຊົ່ວຄາວ ຫຼື ຖາວອນ ການໂຄສະນາທີ່ເຫັນວ່າມີຜົນກະທົບຕໍ່ຜູ້ບໍລິໂພກ.

ຫົວໜ້າກົມ

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ

ປອ. ດຣ. ບຸນຊູ ແກ້ວຫາວົງ